

# ທະນາຄານແຫ່ງ ສປປ ລາວ ໄດ້ສຳເລັດການເປັນເຈົ້າພາບ
# ຈັດກອງປະຊຸມທະວິພາຄີ ລະຫວ່າງ ທຫລ ແລະ ທຫວ ປະຈຳປີ 2021







ໃນຕອນເຊົ້າ, ວັນທີ 30 ພະຈິກ 2021 ທີ່ ທະນາຄານແຫ່ງ ສປປ ລາວ, ທະນາຄານແຫ່ງ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມທະວິພາຄີ ປະຈຳປີ 2021 ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງລັດ ຫວຽດນາມ ໃນຮູບແບບທາງໄກ ຊຶ່ງຝ່າຍ ທະນາຄານແຫ່ງ ສປປ ລາວ ນຳໂດຍ ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ຝ່າຍ ທະນາຄານແຫ່ງລັດ ຫວຽດນາມ ນຳໂດຍ ທ່ານ ນ. ຫງວຽນ ທິ ຮົ່ງ, ຜູ້ວ່າການທະນາຄານແຫ່ງລັດ ຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຕາງໜ້າຈາກສອງທະນາຄານກາງໄດ້ໃຫ້ກຽດເຂົ້າຮ່ວມຢ່າງພ້ອມພຽງ.






ກອງປະຊຸມທະວິພາຄີ ແມ່ນຖືກຈັດຂຶ້ນເປັນປະຈຳທຸກປີ ເພື່ອຮັດແໜ້ນສາຍພົວພັນທີ່ພິເສດ, ຈິງໃຈ ແລະ ໝັ້ນຄົງຍາວນານ ລະຫວ່າງ ສອງທະນາຄານກາງ ທັງເປັນການສະຫຼຸບໝາກຜົນ ແລະ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານການພົວພັນຮ່ວມມືໃນຂະແໜງການເງິນ-ເງິນຕາສອງຝ່າຍ ແລະ ວາງທິດທາງການຮ່ວມມືໃນຕໍ່ໜ້າໂດຍສະເພາະໃນຂົງເຂດການເງິນ-ການທະນາຄານ ທີ່ປະກອບສ່ວນໃນການພັດທະນາຂະແໜງການທະ ນາຄານ ແລະ ເສດຖະກິດຂອງສອງປະເທດ ສປປ ລາວ ແລະ ສສ. ຫວຽດນາມ. ໃນປີນີ້, ກອງປະຊຸມໄດ້ມີການ ປຶກສາຫາລື ແລະ ແລກປ່ຽນຮ່ວມກັນໃນຫຼາຍບັນຫາສຳຄັນຕົ້ນຕໍ ຄື: ສະພາບເສດຖະກິດມະຫາພາກ ແລະ ການ ພັດທະນາຂະແໜງການທະນາຄານຂອງສອງປະເທດ, ມາດຕະການຕອບໂຕ້ຕໍ່ການແຜ່ລະບາດຂອງພະຍາດ COVID-19, ການທົບທວນຄືນ

ບັນດາໂຄງການ ແລະ ແຜນການຮ່ວມມືສອງຝ່າຍໃນອະນາຄົດ ລວມເຖິງການແລກປ່ຽນບົດຮຽນຮ່ວມກັນໃນວຽກງານການສົ່ງເສີມການຊຳລະທີ່ບໍ່ນຳໃຊ້ເງິນສົດ, ແລະ ບັນຫາອື່ນໆທີ່ທັງສອງ ຝ່າຍມີຄວາມສົນໃຈຮ່ວມກັນ.

ກອງປະຊຸມຄັ້ງນີ້ ໄດ້ດຳເນີນໄປເປັນເວລາເຄິ່ງວັນ ດ້ວຍບັນຍາກາດໄມຕີຈິດມິດຕະພາບ ແລະ ການຮ່ວມມືຮອບດ້ານ ຊຶ່ງສາມາດບັນລຸຜົນສຳເລັດຕາມລະດັບຄາດໝາຍ ໂດຍຜ່ານການປຶກສາຫາລື ແລະ ແລກປ່ຽນບົດຮຽນ ຮ່ວມກັນ. ຜົນສຳເລັດຂອງກອງປະຊຸມຄັ້ງນີ້ ຖືເປັນຂີດໝາຍອັນສຳຄັນໃນການເສີມຂະຫຍາຍສາຍພົວພັນຮ່ວມມື ຂອງສອງປະເທດ ເວົ້າລວມ, ເວົ້າສະເພາະກໍ່ຄື ສອງທະນາຄານກາງໃຫ້ນັບມື້ນັບເພີ່ມທະວີຄວາມສະໜິດແໜ້ນ.




**#ຂ່າວໂດຍ: ກົມຮ່ວມມືສາກົນ**

**#ພາບໂດຍ: ນ. ປາໄນ ພົນທະລາ**